# ເພື່ອຄຸນຄູ

ສັນໃດ  ທຽນຫາກຍັງຍອມໄໝ້          ເຜົາຮ່າງເລົາຄີງຕົນ
ຍອມຈູດລົນເຮືອນກາຍ          ເພື່ອແສງໃສຈ້າ
ນ້ຳຕາທຽນໄຫຼລົ້ນ          ທຽນຍັງທົນຈູດຈີ່
ຊີວິດທຽນມອດມ້ວຍ          ພຽງຫວັງໄຕ້ສິ່ງແສງ

ສັນນັ້ນ  ຍາມເມື່ອຄິດໄຄ່ແນ້ງ          ເຖິງແທ່ງຊີວິດຄູ
ທ່ານຫາກມີຄວາມພຽນ          ດຸດດັ່ງທຽນເຜົາໄໝ້
ຈິດໃຈກາຍສຸມເຂົ້າ          ປຸງເອົາຄົນໃຫ້ມີຄ່າ
ຫວັງເພື່ອພາຍພາກຫນ້າ          ວິຊາເຈົ້າ  ຮຸ່ງກະຈາຍ

ຄິດເບິ່ງຄົນທົ່ວຊິງເຂດຄ້າຍ          ພື້ນແຜ່ນດິນພິພົບ
ອາສັຍຄູ  ສິດສອນ          ຈຶ່ງຄ່ອຍມີຄວາມຮູ້
ອາສັຍຄູນຳຊີ້          ວິຊາການ  ຈຶ່ງກ້າກັ່ນ
ອາສັຍຄູ  ຫຼູ່ປັ້ນ          ປັນຍາເສົ້າຈຶ່ງແຈ່ມໃສ

ນ້ຳໃຈຄູ  ສຸດທີ່ສູງສົ່ງໄດ້          ກ້ຳເກິ່ງເທິງເວຫາ
ນ້ຳໃຈຄູ  ກວ້າງກວ່າວັງມະຫີຫຼວງ          ແມ່ກະແສແສນທ້າງ
ນ້ຳໃຈຄູ  ບໍ່ເຄີຍຈາງສູນສິ້ນ          ຍັງໄຫຼລິນບໍ່ຂາດແກ່ງ
ນ້ຳໃຈຄູ  ບໍ່ວ່າຝົນແລະແລ້ງ          ຍັງໃສແຈ້ງກວ່າມະນີ

ດັ່ງນັ້ນ          ຄູຢູ່ໃນໂລກນີ້          ຮຽນຂໍສິ່ງພອນຫາ

ຂໍບູຊາປະນົມນົບ ຂອບພຣະຄຸນບຸນເຈົ້າ
ຂໍຈົດເອົາສລັກໄວ້ ກາງດວງໃຈ ບໍ່ລືມລ່າ
ຂໍສົມມາເຄົາຣົບໄຫວ້ ເຖິງຄຸນເຈົ້າ ພໍ່ ແມ່ ຄຣູ ທ່ານເອີຍ